(ໜັກກວ່າ), ແລະເຣື່ອງຄອບຄົວເຊັ່ນວ່າການຢ່າຮ້າງກັນ ແລະການຄຸ້ມຄອງເດັກນ້ອຍ. ຄຳສັ່ງສຳລັບການປ້ອງກັນມີ ໄວ້ໃຫ້ໂດຍຜ່ານສານເຫລົ່ານີ້ທຸກໆບ່ອນ.

ຖ້າຫາກວ່າເຈົ້າ ແລະ ຂາຄູ່ຂອງເຈົ້າມີຄະດີຢູ່ສານຫລາຍ ກວ່າບ່ອນນຶ່ງ, ຢ່າສູ້ສົມມຸດວ່າຈ່າສານຢູ່ໃນສານບ່ອນນຶ່ງຈະມີ ຣາຍລະອຽດກ່ຽວກັບຄະດີຢູ່ໃນສານອີກບ່ອນນຶ່ງ. ສານແຕ່ລະ ບ່ອນປະຕິບັດງານຕ່າງກັນບໍ່ຂຶ້ນກັບໃຜ. ເຈົ້າຄວນຈະຖືໄປນຳ ເຈົ້າເອກສານຕາມກົດໝາຍທີ່ກ່ຽວຂ້ອງທຸກໆຢ່າງ, ລວມທັງ ໃບຄຳສັ່ງປ້ອງກັນ ແລະຄຳສັ່ງບໍ່ໃຫ້ມີການຕິດຕໍ່, ໃນເວລາ ໄປຟັງຄະດີຢູ່ສານທຸກໆເທື່ອ, ແລະໃຫ້ແນ່ໃຈວ່າຜູ້ອຸ້ມຊູຊ່ວຍ ເຫລືອເຈົ້າຮູ້ຈັກກ່ຽວກັບຄະດີອື່ນຂອງເຈົ້າ.

## ຈະເຮັດແນວໃດຖ້າຫາກວ່າຂາຄູ່ຂອງຂ້ອຍໄດ້ຖືກ ພົບວ່າມີຄວາມຜິດ?

ເຈົ້າສາມາດຍື່ນຂໍເອົາຄຳສັ່ງສຳລັບການປ້ອງກັນ. ໃບຄຳສັ່ງ ຊະນິດນີ້ສາມາດລວມເອົາຂາຄູ່ຂອງເຈົ້າຈາກການເຂົ້າມາ ໃນເຮືອນຂອງເຈົ້າ, ຫ້າມບໍ່ໃຫ້ລາວລົບກວນ ຫລື ຕິດຕໍ່ຫາ ເຈົ້າ, ຫ້າມບໍ່ໃຫ້ລາວເອົາລູກຂອງເຈົ້າອອກຈາກຣັດວໍຊິງຕັນ, ແລະ ກໍ່ຕັ້ງຕາຕລາງເວລາຊົ່ວຄາວສຳລັບການປ້ອງກັນ. ເຈົ້າ ບໍ່ຕ້ອງໄດ້ເປັນຄົນສັນຊາດອະເມຣິກັນ ຫລື ມີບັດຂຽວເພື່ອຈະ ຂໍເອົາຄຳສັ່ງສຳລັບການປ້ອງກັນ. ເຈົ້າສາມາດຂໍເອົາຄຳສັ່ງຊະ ນິດນີ້ຢູ່ຕາມສານທີ່ຢູ່ໃກ້ບ້ານເຈົ້າທີ່ສຸດ. ຜູ້ອຸ້ມຊູຊ່ວຍເຫລືອພິ ເສດຈະຊ່ວຍເຫລືອເຈົ້າ.

ເຈົ້າສາມາດຕິດຕໍ່ໄປຫາອົງການບ່ອນນຶ່ງທີ່ຖືກບົ່ງຊື່ຢູ່ພາຍໃຕ້ ບ່ອນຊ່ວຍເຫລືອຢູ່ໃນຊຸມນຸມຊົນ. ອົງການເຫລົ່ານີ້ທັງໝົດ ເປັນອົງການເອກຊົນ ແລະ ບໍ່ແມ່ນພາກສ່ວນນຶ່ງຂອງຣັຖ ບານ. ຜູ້ອຸ້ມຊູຊ່ວຍເຫລືອສາມາດຊ່ວຍເຫລືອເຈົ້າທີ່ຈະອອກ ແບບແຜນສຳລັບຄວາມປອດພັຍ, ເລະ ຊອກເອົາເຄື່ອງນຸ່ງ, ອາຫານ, ບ່ອນພັກເຊົາ ແລະ ການອຸ້ມຊູຊ່ວຍເຫລືອ.

ເຈົ້າສາມາດເວົ້ານຳຄົນໃດຄົນນຶ່ງຜູ້ທີ່ເຈົ້າເຊື່ອໃຈ, ຜູ້ທີ່ເຂົ້າໃຈ ສະພາບການຂອງເຈົ້າ ແລະ ຜູ້ທີ່ສາມາດຊ່ວຍເຫລືອເຈົ້າໄດ້.

ເຈົ້າສາມາດຮຽນຮູ້ສິດທິທາງກົດໝາຍຂອງເຈົ້າ, ແລະ ໄດ້ຮັບ ຄວາມຊ່ວຍເຫລືອທາງກົດໝາຍໂດຍກົງຈາກອົງການທີ່ຖືກບົ່ງ ຊື່ຢູ່ຂ້າງລຸ່ມນີ້.

## ບ່ອນຊ່ວຍເຫລືອຢູ່ໃນຊຸມນຸມຊົນ

ອົງການທີ່ຖືກບົ່ງຊື່ຢູ່ຂ້າງລຸ່ມນີ້ແມ່ນຂອງເອກຊົນທັງໝົດ ແລະ ບໍ່ແມ່ນພາກສ່ວນນຶ່ງຂອງຣັຖບານ ຫລື ຂອງພະແນກ **INS.**

- **Asian/Pacific Islander Women & Family Safety Center**
  206-467-9976
- **Domestic Abuse Women's Network (DAWN)**
  425-656-7867
- **Eastside Domestic Violence Program**
  425-746-1940 ຫລື 1-800-827-8840
- **New Beginnings**
  206-522-9472
- **Refugee Women's Alliance**
  **(ຮັບໃຊ້ຊຸມນຸມຊົນໃນ 14 ພາສາ)**
  206-721-0243
- **YWCA**
  206-568-7845 ຫລື 425-226-1266

## ບ່ອນຊ່ວຍເຫລືອທາງດ້ານກົດໝາຍ

- **CLEAR** (Coordinated Legal Education Advice and Referral System) :ການບໍຣິການທາງໂທຣະສັບຟຣີສຳລັບ ການຊ່ວຍເຫລືອທາງກົດໝາຍຟຣີກ່ຽວກັບເຣື່ອງກົດໝາຍຄອບຄົວ.
  888-201-1014, TTY 1-888-201-9737
- **Northwest Immigrants Rights Project,**
  206-587-4009 ຫລື 800-445-5771
- **Northwest Justice Project**
  206-464-1519, www.nwjustice.org
- **Northwest Women's Law Center**
  206-621-7691

*ໂຄງການອັນນີ້ໄດ້ຖືກອຸ້ມຊູໂດຍເງິນທຶນ **Grant No. 2001-WF-BX-003** ຊຶ່ງໄດ້ຖືກອະນຸມັດໃຫ້ສານເມືອງຊີອາເຕີນ **Seattle Municipal Court** ໂດຍຫ້ອງການ**Violence Against Women Grants Office, Office of Justice Programs,** U.S. Department of Justice. ທັສນະແນວຄິດຢູ່ໃນເອກສານອັນນີ້ ແລະ ບໍ່ຈຳເປັນວ່າຈະສະເນີເພື່ອໃຫ້ເປັນທ່າທາງ ຫລື ນະໂຍບາຍ ຫລື ນະໂຍບາຍຂອງ **Department of Justice.***

LAOTIAN

BE\81613 MUNI COURT-MULTI LANGUAGE STOP DOMESTIC VIOLENCE FLYER\LAOTIAN.P65 rev. 12/17/02

# ຖ້າຫາກວ່າຄົນໃດ ຄົນນຶ່ງເຮັດໃຫ້ ເຈົ້າເຈັບປວດ ຢູ່ໃນເຮືອນ

## ມີກົດໝາຍ ເພື່ອຈະ ປ້ອງກັນເຈົ້າ

*ຣາຍລະອຽດສຳລັບເມືອງຊີອາເຕີນ ແລະ ຄິງຄາວຕີ, ຣັດວໍຊິງຕັນ*

## ການຜິດຖຽງກັນຮຸນແຮງຢູ່ໃນຄອບຄົວແມ່ນຫຍັງ?

ຂາຄູ່ຂອງເຈົ້າ (ຜົວ, ແຟນຜູ້ຊາຍ ຫລື "ຊູ້ເກົ່າ") ອິດສາບໍ່? ລາວກັກເຈົ້າໃຫ້ຢູ່ໄກຫ່າງຈາກໝູ່ເພື່ອນ ແລະ ຄອບຄົວຂອງເຈົ້າບໍ່? ລາວໄດ້ພະຍາຍາມກີດກັ້ນເຈົ້າຈາກການມີວຽກເຮັດບໍ່? ລາວເຄີຍຂົ່ມຂູ່ວ່າຈະເອົາລູກຂອງເຈົ້າໜີໄປໄກບໍ່? ລາວໄດ້ຂົ່ມຂູ່ວ່າຈະເຮັດໃຫ້ເຈົ້າຖືກເນຣະເທດອອກນອກປະເທດບໍ?

ຂາຄູ່ຂອງເຈົ້າເຄີຍເຮັດໃຫ້ເຈົ້າເຈັບປວດທາງຮ່າງກາຍຈັກເທື່ອບໍ່, ຕົວຢ່າງວ່າ, ໂດຍການຕົບຕີ, ການຊຸກຍູ້, ການປິກ, ການເຕະ, ການບີບຄໍເຈົ້າ, ຫລື ການດຶງຜົມເຈົ້າ? ລາວເຄີຍຂົ່ມຂູ່ວ່າຈະເຮັດໃຫ້ເຈົ້າເຈັບປວດຈັກເທື່ອບໍ່ດ້ວຍອາວຸດເຊັ່ນວ່າປືນ, ມີດ, ຫລື ສິ່ງຂອງແນວອື່ນ? ລາວໄດ້ບອກວ່າການຜິດຖຽງກັນຮຸນແຮງເປັນຄວາມຜິດຂອງເຈົ້າບໍ່?

ຖ້າຫາກວ່າເຈົ້າຕອບວ່າແມ່ນແລ້ວຕໍ່ຄຳຖາມເຫລົ່ານີ້, ເຈົ້າຕົກຢູ່ໃນຄວາມສໍາພັນທີ່ກົດຂີ່ຂົ່ມເຫັງ. ເຈົ້າອາດຈະຕົກຢູ່ໃນອັນຕຣາຍອີກ. ເຈົ້າບໍ່ໄດ້ໂດດດ່ຽວຄົນດຽວ. ຄົນອື່ນຫລາຍໆຄົນຕົກຢູ່ໃນສະພາບອັນດຽວກັນ. ຄວາມຊ່ວຍເຫລືອມີໄວ້ໃຫ້ຢູ່ຕາມອົງການທີ່ຖືກບົ່ງຊີ່ຢູ່ໃນປື້ມຄູ່ມືຫົວນີ້.

ຢູ່ໃນປື້ມຄູ່ມືຫົວນີ້, ພວກເຮົາຮ້ອງຊື່ຜູ້ກົດຂີ່ຂົ່ມເຫັງວ່າແມ່ນ "ລາວ," ແຕ່ວ່າຄົນໃດກໍ່ຕາມ, ຊາຍ ຫລື ຍິງ, ອາດຈະຖືກກົດຂີ່ຂົ່ມເຫັງໂດຍຂາຄູ່ຂອງເຂົາເຈົ້າໄດ້ຄືກັນ.

## ການຜິດຖຽງກັນຮຸນແຮງຢູ່ໃນຄອບຄົວແມ່ນຜິດຕໍ່ກົດໝາຍບໍ່?

ການຜິດຖຽງກັນຮຸນແຮງຢູ່ໃນຄອບຄົວຫລາຍໆແບບແມ່ນຜິດຕໍ່ກົດໝາຍຂອງຣັດວໍຊິງຕັນ. ມັນຜິດກົດໝາຍສຳລັບຜົວເມັຍ ຫລື ຂາຄູ່ຂອງເຈົ້າທີ່ຈະເຮັດໃຫ້ເຈົ້າເຈັບປວດທາງຮ່າງກາຍໃນທາງໃດທາງນຶ່ງ, ຈະບັງຄັບໃຫ້ສົມສູ່ຮ່ວມເພດເມື່ອເວລາເຈົ້າບໍ່ຕ້ອງການ, ທີ່ຈະຂົ່ມຂູ່ເຮັດໃຫ້ເຈັບປວດ ຫລື ຂ້າເຈົ້າ ຫລື ລູກຂອງເຈົ້າ, ຫລື ຈະທຳລາຍຊັບສິນຂອງເຈົ້າ. ຖ້າຫາກວ່າເຈົ້າເປັນຜູ້ຖືກທຳຮ້າຍຂອງການຜິດຖຽງກັນຮຸນແຮງຢູ່ໃນຄອບຄົວ, ມັນມີກົດໝາຍທີ່ຈະປ້ອງກັນເຈົ້າຢູ່.

## ຂ້ອຍຄວນຈະໂທຣະສັບໄປຫາຕຳຣວດບໍ່?

ຖ້າຫາກວ່າເຈົ້າຕົກຢູ່ໃນອັນຕຣາຍ, ໂທຣະສັບໄປຫາ **9-1-1** ເພື່ອຈະຂໍເອົາຄວາມຊ່ວຍເຫລືອນຳຕຳຣວດ. ເຈົ້າຈະຖືກຖາມໃຫ້ບອກບ່ອນຢູ່ທີ່ຖືກຕ້ອງ, ການອະທິບາຍຢ່າງແຈ່ມແຈ້ງວ່າແມ່ນຫຍັງໄດ້ເກີດຂຶ້ນ, ເມື່ອໃດມັນໄດ້ເກີດຂຶ້ນ, ຊື່ຂອງຂາຄູ່ຂອງເຈົ້າ, ວັນເກີດ, ເລກປ້າຍຣົດຍົນ, ແລະ ລັກສນະຮູບຮ່າງ (ສີຂອງຜົມ, ສີຂອງຜິວໜັງ, ອາຍຸ, ລວງສູງ, ນ້ຳໜັກ). ຜູ້ຕອບສາຍໂທຣະສັບຈະສົ່ງເຈົ້າໜ້າທີ່ຕຳຣວດໄປເຮືອນຂອງເຈົ້າ. ເຈົ້າອາດຈະຕ້ອງໄດ້ລໍຖ້າໃຫ້ເຂົາເຈົ້າມາຮອດ. ຖ້າຫາກວ່າເຈົ້າຢ້ານກົວ, ຂໍໃຫ້ຜູ້ຕອບສາຍໃຫ້ຍົກສາຍໄວ້.

ຖ້າຫາກວ່າເຈົ້າປາກພາສາອັງກິດບໍ່ໄດ້, ບອກຜູ້ຮັບສາຍ **9-1-1** ຊື່ຂອງພາສາທີ່ເຈົ້າເວົ້າ (ເປັນພາສາອັງກິດ). ຜູ້ຮັບສາຍ **9-1-1** ຈະຕໍ່ສາຍໂທຣະສັບໄປຫາຄົນໃດຄົນນຶ່ງຜູ້ທີ່ປາກພາສາຂອງເຈົ້າ (ນຳສາຍແປພາສາຂາຂອງ **AT&T language line**). ແລ້ວເຈົ້າຈະເວົ້ານຳສອງຄົນ, ນາຍແປພາສາ ແລະ ຜູ້ຮັບສາຍ **9-1-1**.

## ຈະມີຫຍັງເກີດຂຶ້ນເມື່ອຕຳຣວດມາຮອດ?

ເມື່ອຕຳຣວດມາຮອດ, ເຂົາເຈົ້າຈະແຍກເຈົ້າ ແລະ ຂາຄູ່ຂອງເຈົ້າ ແລະສອບຖາມຄຳຖາມຫລາຍໆຢ່າງນຳແຕ່ລະຄົນ. ຈົ່ງບອກຣາຍລະອຽດຫລາຍໆເທົ່າທີ່ເປັນໄປໄດ້ກ່ຽວກັບເຫດການເກີດຂຶ້ນ. ຖ້າຫາກວ່າເຈົ້າບາດເຈັບ, ຈົ່ງບອກໃຫ້ເຈົ້າໜ້າທີ່ຕຳຣວດເບິ່ງຮອຍບວບຊ້ຳທຸກໆບ່ອນ,ຮອຍໝາຍ, ປາກບາດ ຫລື ການບາດເຈັບທຸກໆຢ່າງ. ຖ້າຫາກວ່າຂາຄູ່ຂອງເຈົ້າໄດ້ເຮັດໃຫ້ເຈົ້າບາດເຈັບ ຫລື ຢ້ານກົວມາກ່ອນໃນເວລາອື່ນໆ, ຈົ່ງບອກເຈົ້າໜ້າທີ່ຕຳຣວດຣາຍລະອຽດຂອງປະວັດອັນນີ້.

ເຈົ້າມີສິດທີ່ຈະໃຫ້ຄຳແຈ້ງການຕໍ່ຕຳຣວດ. ລູກຂອງເຈົ້າ, ຂາຄູ່ ແລະ ສະມາຊິກຄອບຄົວຄົນອື່ນ ບໍ່ ຄວນຈະຖືກໃຊ້ເພື່ອຈະແປພາສາໃຫ້ເຈົ້າ. ເຈົ້າໜ້າທີ່ຕຳຣວດສາມາດໂທຣະສັບໄປຫານາຍແປພາສາທາງໂທຣະສັບເພື່ອຈະແປພາສາໃຫ້ເຈົ້າ. ເຈົ້າສາມາດຂຽນຄຳບັນຣະຍາຍໃນເຫດການທີ່ເກີດຂຶ້ນເປັນພາສາຂອງເຈົ້າເອງ ແລະ ຂໍໃຫ້ເຈົ້າໜ້າທີ່ຕຳຣວດຕື່ມເອົາໃສ່ໃນໃບລາຍງານຂອງເຂົາເຈົ້າ. ຖ້າຫາກວ່າມີປືນຢູ່ໃນເຮືອນຂອງເຈົ້າ, ຈົ່ງບອກໃຫ້ເຈົ້າໜ້າທີ່ຕຳຣວດວ່າຢູ່ໃສ. ອີກອັນນຶ່ງ, ຂໍເອົາເລກບັນທຶກເຫດການ ແລະ ຈົດເອົາໃວ້.

ບໍ່ແມ່ນນະໂຍບາຍຂອງກົມຕຳຣວດທ້ອງຖິ່ນທີ່ຈະລາຍງານຜູ້ເຄາະຮ້າຍຈາກການຜິດຖຽງກັນຮຸນແຮງຢູ່ໃນຄອບຄົວໄປຫາຜແນກກວດຄົນເຂົ້າເມືອງ ແລະ ການປ່ຽນສັນຊາດ. ຖ້າຫາກວ່າເຈົ້າຖືກຖາມກ່ຽວກັບສະພາບຄົນຕ່າງດ້າວຂອງເຈົ້າ, ເຈົ້າສາມາດບອກເຈົ້າໜ້າທີ່ຕຳຣວດວ່າເຈົ້າບໍ່ປະສົງຢາກຈະຕອບ, ແລະ ບອກວ່າເຈົ້າຕ້ອງການເວົ້ານຳທະນາຍຄວາມ.

## ຈະມີຫຍັງເກີດຂຶ້ນຖ້າຫາກວ່າຂາຄູ່ຂອງຂ້ອຍຖືກຈັບຕົວ?

ເຈົ້າໜ້າທີ່ຕຳຣວດອາດຈະຈັບຕົວຂາຄູ່ຂອງເຈົ້າຖ້າຫາກວ່າເຂົາເຈົ້າເຊື່ອວ່າອາສຍາກັມໄດ້ຖືກເຮັດລົງໄປ. ຖ້າຫາກວ່າເຂົາເຈົ້າເອົາລາວໄປເຂົ້າຄຸກ, ລາວອາດຈະຖືກປ່ອຍຕົວອອກຫລາຍໆວັນ ຫລື ດົນນານກວ່າ. ເຈົ້າສາມາດໄດ້ຮັບການແຈ້ງການທາງໂທຣະສັບກ່ຽວກັບການປ່ອຍຕົວຂອງລາວອອກຈາກຄຸກຖ້າຫາກວ່າເຈົ້າຈົດຊື່ນຳຣະບົບ **VINE** (ມີໄວ້ໃຫ້ສຳລັບຄຸກຂອງຄິງຄາວຕີເທົ່ານັ້ນ), ຣະບົບໂທຣະສັບແບບຄອມພິວເຕີ. ເພື່ອຈະຈົດຊື່ສຳລັບການບໍຣິການຟຣີອັນນີ້, ໂທຣະສັບໄປທີ່ **1-877-425-8463.**

## ຈະມີຫຍັງເກີດຂຶ້ນຫລັງຈາກທີ່ຂາຄູ່ຂອງຂ້ອຍຖືກຈັບຕົວ?

ຖ້າຫາກວ່າຂາຄູ່ຂອງເຈົ້າຖືກຈັບຕົວ, ຜູ້ພິພາກສາຈະຕັດສິນວ່າຈະຟ້ອງຄະດີໃສ່ລາວ ຫລື ບໍ່. ມັນບໍ່ຂຶ້ນກັບເຈົ້າທີ່ຈະຟ້ອງຫລືປ່ອຍຄະດີໃສ່ລາວ. ມີແຕ່ຜູ້ພິພາກສາເທົ່ານັ້ນທີ່ສາມາດທຳການຕັດສິນທີ່ຈະຍື່ນຟ້ອງຫລືຈະປ່ອຍຄະດີໄປ.

ຢູ່ໃນເວລາຟັງເຣື່ອງໃນສານເທື່ອທຳອິດ, ວ່າສານຈະອອກໃບຄຳສັ່ງບໍ່ໃຫ້ຕິດຕໍ່, ຊຶ່ງຈະສັ່ງໃຫ້ຂາຄູ່ຂອງເຈົ້າຢູ່ຫ່າງໄກຈາກເຈົ້າ. ຖ້າຫາກວ່າລາວຕິດຕໍ່ຫາເຈົ້າໂດຍຕົນເອງ, ໂດຍທາງໂທຣະສັບຫລື ທາງໄປສະນີ,ເຈົ້າສາມາດໂທຣະສັບໄປຫາ **9-1-1** ແລະ ລາວສາມາດຖືກຈັບຕົວໃໝ່ອີກໄດ້.

ໃບຄຳສັ່ງບໍ່ໃຫ້ຕິດຕໍ່ທົ່ວໄປບໍ່ໃຫ້ການປ້ອງກັນສຳລັບລູກຂອງເຈົ້າ. ຖ້າຫາກວ່າເຈົ້າເປັນຫ່ວງກ່ຽວກັບຄວາມປອດພັຍຂອງລູກຂອງເຈົ້າ, ຫລື ການຈັດແຈງສຳລັບການຢ້ຽມຢາມ, ເຈົ້າຕ້ອງໄດ້ຍື່ນຂໍເອົາຄຳສັ່ງສຳລັບການປ້ອງກັນ.

## ຈະເຮັດແນວໃດຖ້າຫາກວ່າຂ້ອຍຕ້ອງໄດ້ໄປສານ?

ໃນຄະດີອາສຍາກັມ, ມັນອາດຈະມີການຟັງເຣື່ອງຢູ່ໃນສານຫລາຍໆເທື່ອ. ຖ້າຫາກວ່າມີການຂຶ້ນສານສູ້ຄະດີ, ເຈົ້າຈະຖືກແຈ້ງບອກໂດຍທາງໂທຣະສັບ ຫລື ທາງໜັງສືວ່າເຈົ້າໄດ້ຖືກຄາດໝາຍວ່າຈະຕ້ອງໄປປາກົດຕົວຢູ່ສານ. ຖ້າຫາກວ່າຄົນໃດຄົນນຶ່ງຂົ່ມຂູ່ເຈົ້າເພື່ອຈະພະຍາຍາມກີດກັນເຈົ້າຈາກການໄປສານ, ອັນນັ້ນແມ່ນອາສຍາກັມ ແລະ ເຈົ້າສາມາດຣາຍງານໃຫ້ຕຳຣວດໄດ້.

ຈະມີຜູ້ອູ້ມຊູຊ່ວຍເຫລືອຈະເຮັດວຽກນຳເຈົ້າເພື່ອຈະຊ່ວຍເຫລືອເຈົ້າຕລອດການດຳເນີນການທາງສານ. ໃຫ້ແນ່ໃຈ ວ່າຜູ້ອູ້ມຊູຊ່ວຍເຫລືອຮູ້ຈັກວ່າຈະຕິດຕໍ່ໄປຫາເຈົ້າຢູ່ໃສ. ຢູ່ໃນສານ, ຜູ້ພິພາກສາ ແລະ ທະນາຍຄວາມຕໍ່ສູ້ຈະສອບຖາມຄຳຖາມເຈົ້າກ່ຽວກັບເຫດການຜິດຖຽງກັນຮຸນແຮງຢູ່ໃນຄອບຄົວ.

## ຈະມີສານຫລາຍກວ່າບ່ອນນຶ່ງບໍ?

ຢູ່ໃນຄິງຄາວຕີ, ມັນມີສານຕ່າງກັນຫລາຍໆບ່ອນ. ຜູ້ອູ້ມຊູຊ່ວຍເຫລືອຂອງເຈົ້າຈະອະທິບາຍຣະບົບຂອງສານໃຫ້ເຈົ້າຟັງ. ສານທ້ອງຖິ່ນ (ເມືອງ ແລະ ເຂດ) ຟັງເຣື່ອງຄະດີແພ່ງ (ຣະ